ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

Basic Education Quality and Access in Lao PDR






## Australian Parliamentarians and Government of Lao PDR officials celebrate key achievements of the bilateral partnership in primary education development

## Media Report

**19 Sep – 15 Oct 2025**

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ ຕາງໜ້າໃຫ້ລັດຖະບານອົດສະຕຣາລີ
Basic Education Quality and Access in Lao PDR is managed by Tetra Tech International Development on behalf of the Australian Government.

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2025-09-23 | Newspaper | Vientiane Mai | Front and Page 7 |
| 2025-09-23 | Newspaper | Pathedlao | Page 4 |
| 2025-09-23 | Newspaper | Vientiane Times | Front and Page 3 |
| 2025-09-24 | Newspaper | Army | Page 6 |
| 2025-09-25 | Newspaper | Vientiane Mai | Page 2 |
| 2025-09-25 | Newspaper | Pasaxon | Page 3 |
| 2025-09-19 | Social media | Lao National Radio FM 103.7 Facebook | 177K Followers |
| 2025-09-19 | Social media | Economic and Commerce Facebook | 687K Followers |
| 2025-09-19 | Social media | Lao National Television Youtube | 133K Subscribers |
| 2025-09-22 | Social media | Lao People's Army News Facebook | 148K Followers |
| 2025-09-22 | Social media | Pasaxon Facebook | 31K Followers |
| 2025-09-22 | Social media | Edu-Sport Daily News Facebook | 13K Followers |
| 2025-09-22 | Social media | Laos News KPL Facebook | 15K Followers |
| 2025-09-23 | Social media | Vientiane Times Facebook | 80K Followers |
| 2025-09-23 | Social media | Lao PSTV Facebook | 254K Followers |
| 2025-09-24 | Social media | Edu-Sport TV Online Facebook | 77K Followers |
| 2025-09-24 | Social media | Lao ESTV Youtube | 1.83K Subscribers |
| 2025-09-25 | Social media | Lao National Television-English Program Facebook | 75K Followers |
| 2025-09-26 | Social media | Lao Security News Facebook | 153K Followers |
| 2025-09-19 | Website | Laoedaily.com | |
| 2025-09-22 | Website | Kongthap (Army) | |
| 2025-09-22 | Website | KPL English | Read article in English here |
| 2025-09-23 | Website | Vientiane Times | |
| 2025-09-26 | Website | BEQUAL | Read article in English here<br>Read article in Lao here |
| 2025-10-15 | Website | Educationnews.la | Read article in Lao here |
| 2025-09-20 | Radio | Army Radio FM 99.7 | |
| 2025-09-20 | Radio | Public Security Radio FM 101.5 | |
| 2025-09-20 | Radio | Lao National Radio FM 103.7 | |
| 2025-09-20 | Radio | Vientiane Radio FM 105.5 | |
| 2025-09-20 | Radio | Education news FM 103.7 MHZ | |
| 2025-09-19 | TV | Lao National Television | Watch TV news here<br>At time: 13:47 |
| 2025-09-23 | TV | Lao PSTV | Watch TV news here |
| 2025-09-24 | TV | Lao ESTV | |

| | | | |
|---|---|---|---|
| 2025-09-25 | TV | Lao National Television-English Program | Watch TV news here |
| 2025-09-29 | WhatsApp | MT-PT WhatsApp and FB groups | 19 groups with trainers +/- 713 members |
| 2025-09-29 | WhatsApp | PESS-DESB | 18 Provincial groups 426 members |
| 2025-09-29 | WhatsApp | Pre-Service Writing team | 8 TTCs and 2 universities 73 members |
| 2025-09-29 | WhatsApp | Target DESB | Teacher Dev Units in 30 target districts 64 members |
| 2025-09-29 | WhatsApp | Target TTC | Key coordinators from the 3 target TTCs 17 members |
| 2025-09-29 | WhatsApp | IPS | in targeted provinces-LNT, XKH, SVK- 8 Districts in XKH, 12 Districts |
| 2025-09-29 | WhatsApp | Teaching Standard Review group | MT-PT- 28 members |

## Pictures of articles in the media

| 2025-09-23 | Newspaper | Vientiane Mai | Front and Page 7 |
|---|---|---|---|



# ຢ້ຽມຢາມໂຮງຮຽນປະຖົມ
## ສັງເກດການປັບປຸງດ້ານການຮຽນ-ການສອນ

ຄະນະຜູ້ແທນສະພາປະເທດອົດສະຕຣາລີ ທີ່ເຂົ້າຮ່ວມໂຄງການລິເລີ່ມການເປັນຜູ້ນໍາພາກພື້ນປະເທດອົດສະຕຣາລີ (ARLI) ແລະ ການນໍາກະຊວງສຶກສາທິການ ແລະ ກິລາ (ສສກ) ເຄື່ອນໄຫວຢ້ຽມຢາມໂຮງຮຽນປະຖົມ ໃນນະຄອນຫຼວງວຽງຈັນ ວັນທີ 19 ກັນຍາຜ່ານມາ ໂດຍມີທ່ານ ກິ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີກະຊວງ ສສກ ທ່ານນາງ ເບັນນິຕາ ຊໍາເມີວິວ ຮອງເອກອັກຄະລັດຖະທູດອົດສະຕຣາລີ ປະຈໍາລາວ ພ້ອມດ້ວຍຜູ້ຕາງໜ້າຈາກກະຊວງ ສສກ ກະຊວງການຕ່າງປະເທດ ກະຊວງການເງິນ ພະນັກງານ ຄູ-ອາຈານ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.



### ຢ້ຽມຢາມໂຮງຮຽນ ...

ຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ທີ່ສະໜັບສະໜູນໂດຍລັດຖະບານອົດສະຕຣາລີ ໄດ້ຊຸກຍູ້ໃຫ້ການຮຽນມີຄວາມມ່ວນຊື່ນ ມີການ ຖາມ-ຕອບ ແລະ ການປະຕິບັດຕົວຈິງ ໄດ້ປ່ຽນຈາກການຮຽນແບບເກົ່າ ທີ່ເນັ້ນແຕ່ການຈື່ຈໍາ ຄູໄດ້ແນະນໍາໃຫ້ນັກຮຽນໄດ້ຮຽນຮູ້ຜ່ານກິດຈະກໍາຕ່າງໆ ໂດຍເນັ້ນໃສ່ການຄົ້ນຄິດແບບວິເຄາະ ແລະ ການມີສ່ວນຮ່ວມ ສະແດງໃຫ້ເຫັນຜົນສໍາເລັດຂອງການປັບປຸງຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດ.

ນອກນີ້ ຄະນະຜູ້ແທນຍັງໄດ້ຢ້ຽມຊົມການວາງສະແດງທີ່ນໍາສະເໜີໂດຍຜູ້ຕາງໜ້າຈາກກະຊວງ ສສກ ໂດຍຍົກໃຫ້ເຫັນ 3 ຂົງເຂດສໍາຄັນ ທີ່ລັດຖະບານອົດສະຕຣາລີ ໃຫ້ການສະໜັບສະໜູນ ແລະ ເປັນໃຈກາງໃນການປັບປຸງການສຶກສາ ທີ່ກໍາລັງດໍາເນີນຢູ່ ຄື: ຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດສະບັບປັບປຸງໃໝ່ ບົດຮຽນຝຶກເວົ້າພາສາລາວ ທີ່ສ້າງຂຶ້ນເພື່ອສະໜັບສະໜູນນັກຮຽນ ທີ່ບໍ່ໄດ້ເວົ້າພາສາລາວເປັນພາສາຫຼັກໃນຄອບຄົວ ແລະ ສົ່ງເສີມການຮຽນຮ່ວມ ໂດຍສະເພາະ ນັກຮຽນທີ່ມາຈາກຫຼາຍຊົນເຜົ່າ ແລະ ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອສົ່ງເສີມໃຫ້ຄູມີຄວາມຮູ້ຄວາມສາມາດ ແລະ ຮັບປະກັນການສອນທີ່ມີຄຸນນະພາບໃນທົ່ວປະເທດ ພ້ອມນີ້ ຍັງໄດ້ມອບປຶ້ມນິທານ ອຸປະກອນກິລາ ແລະ ອຸປະກອນການຮຽນ ໃຫ້ໂຮງຮຽນ ຕື່ມອີກ.

| 2025-09-23 | Newspaper | Pathedlao | Page 4 |
|---|---|---|---|



ປະເທດລາວ 4 | ເຫດການ ແລະ ການພັດທະນາ | 23/09/2025

# ອົດສະຕຣາລີ-ກະຊວງ ສສກ ລົງຢ້ຽມຢາມໂຮງຮຽນທີ່ໄດ້ຮັບທຶນຊ່ວຍເຫຼືອ ຜ່ານແຜນງານບີຄວາ

ຂປລ. ທ້າຍອາທິດຜ່ານມາ, ຄະນະຜູ້ແທນສະພາອົດສະຕຣາລີ ທີ່ເຂົ້າຮ່ວມໂຄງການລິເລີ່ມການເປັນຜູ້ນໍາພາກພື້ນອົດສະຕຣາລີ ໄປຢ້ຽມຢາມໂຮງຮຽນປະຖົມທົ່ງກາງ ນະຄອນຫຼວງວຽງຈັນ ຮ່ວມກັບ ທ່ານ ກິ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ (ສສກ), ທ່ານ ນາງ ເບັນນິຕາ ຊໍາເມີວິວ ຮອງເອກອັກຄະລັດຖະທູດອົດສະຕຣາລີ ປະຈໍາ ລາວ, ພ້ອມດ້ວຍຄະນະກົມຈາກກະຊວງສຶກສາທິການ ແລະ ກິລາ ແລະ ພາກ ສ່ວນກ່ຽວຂ້ອງ.

ການຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນໄດ້ເຫັນຜົນໄດ້ຮັບຕົວຈິງ ຂອງການໃຫ້ທຶນຊ່ວຍເຫຼືອຢ່າງຕໍ່ເນື່ອງຂອງລັດຖະບານອົດສະຕຣາລີ ໃນການສຶກສາຊັ້ນປະຖົມ ໂດຍຜ່ານແຜນງານບີຄວາ ໂດຍສະມາຊິກສະພາອົດສະຕຣາລີ ໄດ້ຮ່ວມສັງເກດການສອນໃນຫ້ອງຮຽນທີ່ມີຄວາມມ່ວນຊື່ນ, ນັກຮຽນມີສ່ວນຮ່ວມໃນການຮຽນຢ່າງຫ້າວຫັນ ໃນວິຊາພາສາລາວ, ພາສາອັງກິດ, ວິທະຍາສາດ ແລະ ສິ່ງແວດລ້ອມ. ນັກຮຽນໄດ້ຮ່ວມການທົດລອງວິທະຍາສາດດ້ວຍການປະຕິບັດຕົວຈິງ ແລະ ຮ່ວມກັນເຮັດກິດຈະກໍາຮຽນພາສາລາວ ແລະ ພາສາອັງກິດ ດ້ວຍຄວາມເອົາໃຈໃສ່ ສະແດງໃຫ້ເຫັນເຖິງຄວາມມ່ວນຊື່ນ ແລະ ຄວາມມັກໃນການຮຽນ. ວິທີການສິດສອນແບບໃໝ່ຂອງຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ທີ່ສະໜັບສະໜູນໂດຍລັດຖະບານອົດສະຕຣາລີ ໄດ້ຊຸກຍູ້ໃຫ້ການຮຽນມີຄວາມມ່ວນຊື່ນ, ມີການຖາມ-ຕອບ ແລະ ການປະຕິບັດຕົວຈິງ, ໄດ້ປ່ຽນຈາກການຮຽນແບບເກົ່າທີ່ເນັ້ນໃສ່ແຕ່ການຈື່ຈໍາ. ຄູໄດ້ແນະນໍາໃຫ້ນັກຮຽນໄດ້ຮຽນຮູ້ຜ່ານກິດຈະກໍາຕ່າງໆ ໂດຍເນັ້ນໃສ່ການຄົ້ນຄິດແບບວິເຄາະ ແລະ ການມີສ່ວນຮ່ວມ, ສະແດງໃຫ້ເຫັນເຖິງຜົນສໍາເລັດຂອງການປັບປຸງຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດ.

ທ່ານ ກິ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ໄດ້ມີຄໍາເຫັນວ່າ: ການຢ້ຽມຢາມໂຮງຮຽນຄັ້ງນີ້, ເປັນການສະແດງເຖິງສາຍພົວພັນຄູ່ຮ່ວມມືອັນໜັກແໜ້ນ ລະຫວ່າງ ລາວ ແລະ ອົດສະຕຣາລີ ໃນການພັດທະນາການສຶກສາຂັ້ນພື້ນຖານໃຫ້ມີຄຸນນະພາບ, ພວກເຮົາຮ່ວມກັນສ້າງລະບົບການສຶກສາທີ່ສົ່ງເສີມການຮຽນຮ່ວມ ນັກຮຽນໄດ້ມີສ່ວນຮ່ວມຢ່າງຕັ້ງໜ້າໃນການຮຽນ ແລະ ພັດທະນາທັກສະທີ່ຈໍາເປັນສໍາລັບສະຕະວັດທີ 21. ການສະໜັບສະໜູນຂອງລັດຖະບານອົດສະຕຣາລີ ແມ່ນມີຄວາມສໍາຄັນຕໍ່ການຫັນປ່ຽນຄັ້ງນີ້, ແລະ ພວກເຮົາຂໍຂອບໃຈສໍາລັບຄວາມມຸ່ງໝັ້ນໃນການຊ່ວຍເຫຼືອຂອງພວກທ່ານ.

ທ່ານ ນາງ ເບັນນິຕາ ຊໍາເມີວິວ ກໍໄດ້ມີຄໍາເຫັນວ່າ: ລັດຖະບານອົດສະຕຣາລີ ໄດ້ຖືເອົາສາຍພົວພັນອັນຍາວນານກັບ ລາວ ໂດຍສະເພາະກັບກະຊວງສຶກສາທິການ ແລະ ກິລາ ເປັນສິ່ງທີ່ສໍາ, ການຮ່ວມມືອັນຍາວນານຂອງພວກເຮົາ ໂດຍຜ່ານແຜນງານບີຄວາ ໄດ້ສະທ້ອນໃຫ້ເຫັນວິໄສທັດ ແລະ ຄວາມມຸ່ງໝັ້ນຮ່ວມກັນຂອງພວກເຮົາໃນຂະແໜງການສຶກສາ ທີ່ສົ່ງເສີມການຮຽນຮ່ວມ ແລະ ມີຄຸນນະພາບ. ໃນການລົງຢ້ຽມຢາມໂຮງຮຽນຄັ້ງນີ້, ຖືເປັນວາລະທີ່ພາກພູມໃຈ ທີ່ໄດ້ເຫັນໝາກຜົນໃນທາງທີ່ດີຂອງການຮ່ວມມືຂອງພວກເຮົາ ເພື່ອສົ່ງເສີມເສັ້ນທາງການຮຽນຮູ້ຂອງເດັກ.

ຄຽງຄູ່ກັບການຢ້ຽມຢາມໂຮງຮຽນແລ້ວ, ຄະນະຜູ້ແທນໄດ້ຢ້ຽມຊົມການວາງສະແດງທີ່ນໍາສະເໜີໂດຍຜູ້ຕາງໜ້າຈາກ ກະຊວງສຶກສາທິການ ແລະ ກິລາ ໂດຍຍົກໃຫ້ເຫັນ 3 ຂົງເຂດສໍາຄັນທີ່ ລັດຖະບານອົດສະຕຣາລີ ໃຫ້ການສະໜັບສະໜູນ ແລະ ເປັນໃຈກາງໃນການປັບປຸງການສຶກສາທີ່ກໍາລັງດໍາເນີນຢູ່ຄື: ຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດສະບັບປັບປຸງໃໝ່; ບົດຮຽນຝຶກເວົ້າພາສາລາວ ທີ່ສ້າງຂຶ້ນເພື່ອສະໜັບສະໜູນນັກຮຽນທີ່ບໍ່ໄດ້ເວົ້າພາສາລາວເປັນພາສາຫຼັກໃນຄອບຄົວ ແລະ ສົ່ງເສີມການຮຽນຮ່ວມ ໂດຍສະເພາະນັກຮຽນທີ່ມາຈາກຫຼາຍຊົນເຜົ່າ; ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອສົ່ງເສີມໃຫ້ຄູມີຄວາມຮູ້ຄວາມສາມາດ ແລະ ຮັບປະກັນການສອນທີ່ມີຄຸນນະພາບໃນທົ່ວປະເທດ. ພ້ອມກັນນີ້, ລັດຖະບານອົດສະຕຣາລີໄດ້ມອບປຶ້ມນິທານ, ອຸປະກອນກິລາ ແລະ ອຸປະກອນການຮຽນໃຫ້ແກ່ໂຮງຮຽນດັ່ງກ່າວຕື່ມອີກ.

| 2025-09-23 | Newspaper | Vientiane Times | Front and Page 3 |
|---|---|---|---|

Vientiane Times
LAO PRESS IN FOREIGN LANGUAGES
The First National English Language Newspaper established in 1994



Laos, Australia reaffirm commitment to improving primary education

[ Page 3 ]



Lao officials and an Australian delegation visit a primary school in Vientiane last week.

# Laos, Australia reaffirm commitment to improving primary education

Times Reporters

Lao government officials and Australian parliamentarians are celebrating key achievements in their partnership in primary education development, visiting target schools to observe improved teaching and learning in action.

Senior Lao officials and a delegation of Australian parliamentarians participating in the Australian Regional Leadership Initiative (ARLI) visited a primary school in Vientiane last week.

Among the group were Laos' Deputy Minister of Education and Sports Mr Kingmano Phommahaxay and the Deputy Ambassador of the Australian Embassy, Ms Benita Sommerville.

The visit highlighted the tangible outcomes of Australia's ongoing investment in primary education through the BEQUAL programme.

The parliamentarians observed lively classrooms where students actively engaged in learning Lao Language and English, science classes, and environmental studies.

Children participated in hands-on experiments and collaborated enthusiastically on language activities, showing enjoyment and curiosity.

The new teaching approach of the revised primary curriculum supported by Australia encourages learning through fun, interaction, and practical application, moving away from rote memorisation.

Teachers guided students through activities, with a focus on critical thinking and participation, evidencing the success of the revamped primary school curriculum.

Mr Kingmano said "This visit reaffirms the strong partnership between Laos and Australia in advancing quality basic education."

He noted that Australia's support, through the BEQUAL programme, has played a pivotal role in revising the national curriculum, producing quality teaching and learning materials, and establishing a continuing professional development system for teachers.

The programme's second phase will ensure that teachers have ongoing opportunities to upgrade their skills and deliver high-quality education to every child.

Ms Sommerville said Australia highly values its long-standing relationship with Laos and the Ministry of Education and Sports.

"Our partnership, through the BEQUAL programme, reflects our shared vision and commitment to inclusive and quality education. This visit is a proud moment to see firsthand the positive impact of our collaboration to enhance children's learning journeys."

"Ensuring every child has access to quality education means embracing diversity and inclusivity. We are proud to support initiatives like the Spoken Lao approach, which helps students who don't speak Lao at home to fully participate and thrive in the classroom," she said.

The visit concluded with the donation of learning materials, including storybooks, sports equipment, and school supplies, from the Australian Government to the school.

| 2025-09-25 | Newspaper | Pasaxon | Page 3 |
|---|---|---|---|

# ຄະນະຜູ້ແທນສະພາອິສຕຣາລີ ຢ້ຽມຢາມໂຮງຮຽນປະຖົມ ໃນ ນວ

ຄະນະຜູ້ແທນສະພາປະເທດອິສຕຣາລີ ທີ່ເຂົ້າຮ່ວມໂຄງການລິເລີ່ມການເປັນຜູ້ນຳພາກພື້ນປະເທດອິສຕຣາລີ (ARLI) ໄດ້ໄປຢ້ຽມຢາມໂຮງຮຽນປະຖົມແຫ່ງໜຶ່ງໃນນະຄອນຫຼວງວຽງຈັນ (ນວ) ໃນວັນທີ 19 ກັນຍາຜ່ານມາ ໂດຍມີ ທ່ານ ກິ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ (ສສກ), ທ່ານນາງ ເບັນນິຕາ ຊຳເມີວິວ ຕາງໜ້າເອກອັກຄະລັດຖະທູດອິສຕຣາລີປະຈຳ ສປປ ລາວ, ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ການລົງຢ້ຽມຢາມຄັ້ງນີ້, ໄດ້ຮ່ວມກັນສັງເກດການສອນໃນຫ້ອງຮຽນທີ່ມີຄວາມມ່ວນຊື່ນ, ນັກຮຽນ ໄດ້ມີສ່ວນຮ່ວມໃນການຮຽນຢ່າງຫ້າວຫັນໃນວິຊາພາສາລາວ, ພາສາອັງກິດ, ວິທະຍາສາດ ແລະ ສິ່ງແວດລ້ອມ. ນັກຮຽນໄດ້ຮ່ວມກັນທົດລອງວິທະຍາສາດດ້ວຍການປະຕິບັດຕົວຈິງ ແລະ ຮ່ວມມືກັນຢ່າງເອົາໃຈໃສ່ໃນການເຮັດກິດຈະກຳຮຽນພາສາລາວ ແລະ ພາສາອັງກິດ ສະແດງໃຫ້ເຫັນເຖິງຄວາມມ່ວນຊື່ນ ແລະ ຄວາມມັກໃນການຮຽນ, ວິທີການສິດສອນແບບໃໝ່ຂອງຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ທີ່ສະໜັບສະໜູນໂດຍລັດຖະບານອິສຕຣາລີ ໄດ້ຊຸກຍູ້ໃຫ້ການຮຽນມີຄວາມມ່ວນຊື່ນ, ມີການຖາມ-ຕອບ ແລະ ການປະຕິບັດຕົວຈິງ, ໄດ້ປ່ຽນຈາກການຮຽນແບບເກົ່າທີ່ເນັ້ນແຕ່ການຈື່ຈຳ. ພ້ອມນັ້ນ, ຄູໄດ້ແນະນຳໃຫ້ນັກຮຽນໄດ້ຮຽນຮູ້ຜ່ານກິດຈະກຳຕ່າງໆ ໂດຍເນັ້ນໃສ່ການຄິດແບບວິເຄາະ ແລະ ການມີສ່ວນຮ່ວມ, ສະແດງໃຫ້ເຫັນເຖິງຜົນສຳເລັດຂອງການປັບປຸງຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດ.

ທ່ານ ກິ່ງມະໂນ ພົມມະຫາໄຊ ກ່າວວ່າ: "ການຢ້ຽມຢາມໂຮງຮຽນຄັ້ງນີ້ ເປັນການສະແດງເຖິງສາຍພົວພັນຄູ່ຮ່ວມມືອັນໜັກແໜ້ນລະຫວ່າງສປປ ລາວ ແລະ ລັດຖະບານອິສຕຣາລີ ໃນການພັດທະນາການສຶກສາຂັ້ນພື້ນຖານໃຫ້ມີຄຸນນະພາບ, ພວກເຮົາຮ່ວມກັນສ້າງລະບົບການສຶກສາທີ່ສົ່ງເສີມການຮຽນຮ່ວມ ຊຶ່ງນັກຮຽນໄດ້ມີສ່ວນຮ່ວມຢ່າງຕັ້ງໜ້າໃນການຮຽນ ແລະ ພັດທະນາທັກສະທີ່ຈຳເປັນສຳລັບສະຕະວັດທີ 21. ການສະໜັບສະໜູນຂອງລັດຖະບານອິສຕຣາລີແມ່ນມີຄວາມສຳຄັນຕໍ່ການຫັນປ່ຽນຄັ້ງນີ້ ແລະ ພວກເຮົາຂໍຂອບໃຈສຳລັບຄວາມມຸ່ງໝັ້ນໃນການຊ່ວຍເຫຼືອ".

ທ່ານນາງ ເບັນນິຕາ ຊຳເມີວິວ ໄດ້ກ່າວວ່າ: "ລັດຖະບານອິສຕຣາລີໄດ້ຖືເອົາສາຍພົວພັນອັນຍາວນານກັບ ສປປ ລາວ ໂດຍສະເພາະກັບກະຊວງສສກ ເປັນສິ່ງທີ່ສຳຄັນຫຼາຍ. ການຮ່ວມມືອັນຍາວນານຂອງພວກເຮົາ ໂດຍຜ່ານແຜນງານບີຄວາ ໄດ້ສະທ້ອນໃຫ້ເຫັນວິໄສທັດ ແລະ ຄວາມມຸ່ງໝັ້ນຮ່ວມກັນຂອງພວກເຮົາໃນຂະແໜງການສຶກສາທີ່ສົ່ງເສີມການຮຽນຮ່ວມ ແລະ ມີຄຸນນະພາບ. ໃນການລົງຢ້ຽມຢາມຄັ້ງນີ້ ຍັງຖືວ່າເປັນວາລະທີ່ພາກພູມໃຈທີ່ໄດ້ເຫັນໝາກຜົນໃນທາງທີ່ດີຂອງການຮ່ວມມືຂອງພວກເຮົາເພື່ອເສີມສົ່ງເສີມເສັ້ນທາງການຮຽນຮູ້ຂອງເດັກ."

ໂອກາດນີ້, ຄະນະຜູ້ແທນໄດ້ຢ້ຽມຊົມການວາງສະແດງທີ່ນຳສະເໜີໂດຍຜູ້ຕາງໜ້າຈາກ ສສກ ຊຶ່ງໄດ້ຍົກໃຫ້ເຫັນ 3 ຂົງເຂດສຳຄັນທີ່ລັດຖະບານອິສຕຣາລີໃຫ້ການສະໜັບສະໜູນ ແລະ ເປັນໃຈກາງໃນການປັບປຸງການສຶກສາທີ່ກຳລັງດຳເນີນຢູ່ຄື: ຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດສະບັບປັບປຸງໃໝ່; ບົດຮຽນຝຶກເວົ້າພາສາລາວ ທີ່ສ້າງຂຶ້ນເພື່ອສະໜັບສະໜູນນັກຮຽນທີ່ບໍ່ໄດ້ເວົ້າພາສາລາວເປັນພາສາຫຼັກໃນຄອບຄົວ ແລະ ສົ່ງເສີມການຮຽນຮ່ວມໂດຍສະເພາະນັກຮຽນທີ່ມາຈາກຫຼາຍຊົນເຜົ່າ ແລະ ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອສົ່ງເສີມໃຫ້ຄູມີຄວາມຮູ້ຄວາມສາມາດ ແລະ ຮັບປະກັນການສອນທີ່ມີຄຸນນະພາບໃນທົ່ວປະເທດ.

ທ່ານ ກິ່ງມະໂນ ພົມມະຫາໄຊ ຍັງໄດ້ຍົກໃຫ້ເຫັນວ່າ: "ການສະໜັບສະໜູນຂອງລັດຖະບານ ອິສຕຣາລີ ຜ່ານແຜນງານບີຄວາ ໄດ້ມີບົດບາດສຳຄັນໃນການປັບປຸງຫຼັກສູດແຫ່ງຊາດ, ການສ້າງສື່ການຮຽນການສອນໃຫ້ມີຄຸນນະພາບ, ການສ້າງລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃຫ້ແກ່ຄູ. ໄລຍະທີ 2 ຂອງໂຄງການແມ່ນສຸມໃສ່ຮັບປະກັນໃຫ້ຄູອາຈານມີໂອກາດສືບຕໍ່ຍົກລະດັບທັກສະ ແລະ ສະໜອງການສຶກສາຄຸນນະພາບສູງໃຫ້ແກ່ເດັກທຸກຄົນ."

(ຂ່າວ: ວັນເພັງ, ຂໍ້ມູນ-ພາບ: ບີຄວາ)

**2025-09-19** | **Lao National Radio FM 103.7 Facebook**

Lao National Radio
September 19 at 7:09 PM

ຄະນະຜູ້ແທນສະພາອົດສະຕຣາລີ ແລະ ກະຊວງສຶກສາທິການ ແລະ ກິລາ ລົງຢ້ຽມຢາມໂຮງຮຽນປະຖົມທົ່ງກາງ, ເມືອງສີສັດຕະນາກ ເພື່ອສັງເກດການປັບປຸງດ້ານການຮຽນ-ການສອນ.

ວັນທີ 19 ກັນຍາ 2025 ຄະນະຜູ້ແທນສະພາອົດສະຕຣາລີ ທີ່ເຂົ້າຮ່ວມໂຄງການລິເລີ່ມການເປັນຜູ້ນໍາພາກພື້ນອົດສະຕຣາລີ ໄປຢ້ຽມຢາມໂຮງຮຽນປະຖົມທົ່ງກາງ, ນະຄອນຫຼວງວຽງຈັນ ຮ່ວມກັບ ທ່ານ ກິ່ງມະໂນ ພົມມະຫາໄຊ, ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ທ່ານ ນາງ ເປັນນີຕາ ຊໍາເມີອິດ, ຮອງເອກອັກຄະລັດຖະທູດອົດສະຕຣາລີ ປະຈໍາ ລາວ ພ້ອມດ້ວຍຄະນະກົມຈາກກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນກ່ຽວຂ້ອງ.

ການຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນໄດ້ເຫັນຜົນໄດ້ຮັບຕົວຈິງຂອງການໃຫ້ທຶນຊ່ວຍເຫຼືອຢ່າງຕໍ່ເນື່ອງຂອງລັດຖະບານອົດສະຕຣາລີ ໃນການສຶກສາຊັ້ນປະຖົມ ໂດຍຜ່ານແຜນງານບີຄວາ. ສະມາຊິກສະພາໄດ້ຮ່ວມສັງເກດການສອນໃນຫ້ອງຮຽນທີ່ມີຄວາມມ່ວນຊື່ນ, ນັກຮຽນມີສ່ວນຮ່ວມໃນການຮຽນຢ່າງຫ້າວຫັນໃນວິຊາພາສາລາວ, ພາສາອັງກິດ, ວິທະຍາສາດ ແລະ ສິ່ງແວດລ້ອມ. ນັກຮຽນໄດ້ຮ່ວມການທົດລອງວິທະຍາສາດດ້ວຍການປະຕິບັດຕົວຈິງ ແລະ ຮ່ວມກັນເຮັດກິດຈະກໍາຮຽນພາສາລາວ ແລະ ພາສາອັງກິດ ດ້ວຍຄວາມເອົາໃຈໃສ່ ສະແດງໃຫ້ເຫັນເຖິງຄວາມມ່ວນຊື່ນ ແລະ ຄວາມມັກໃນການຮຽນ. ວິທີການສິດສອນແບບໃໝ່ຂອງຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ທີ່ສະໜັບສະໜູນໂດຍລັດຖະບານອົດສະຕຣາລີ ໄດ້ຊຸກຍູ້ໃຫ້ການຮຽນມີຄວາມມ່ວນຊື່ນ, ມີການຖາມຕອບ ແລະ ການປະຕິບັດຕົວຈິງ, ໄດ້ປ່ຽນຈາກການຮຽນແບບເກົ່າທີ່ເນັ້ນໃສ່ແຕ່ການຈື່ຈໍາ. ຄູໄດ້ແນະນໍາໃຫ້ນັກຮຽນໄດ້ຮຽນຮູ້ຜ່ານກິດຈະກໍາຕ່າງໆ, ໂດຍເນັ້ນໃສ່ການຄົ້ນຄິດແບບວິເຄາະ ແລະ ການມີສ່ວນຮ່ວມ, ສະແດງໃຫ້ເຫັນເຖິງຜົນສໍາເລັດຂອງການປັບປຸງຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດ.

ທ່ານ ກິ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ມີຄໍາເຫັນວ່າ: ການຢ້ຽມຢາມໂຮງຮຽນຄັ້ງນີ້ເປັນການສະແດງເຖິງສາຍພົວພັນຄູ່ຮ່ວມມືອັນ ໜັກແໜ້ນລະຫວ່າງ ລາວ ແລະ ອົດສະຕຣາລີ ໃນການພັດທະນາການສຶກສາຂັ້ນພື້ນຖານໃຫ້ມີຄຸນນະພາບ, ພວກເຮົາຮ່ວມກັນສ້າງລະບົບການສຶກສາທີ່ສົ່ງເສີມການຮຽນຮ່ວມ ນັກຮຽນໄດ້ມີສ່ວນຮ່ວມຢ່າງຕັ້ງໜ້າໃນການຮຽນ ແລະ ພັດທະນາທັກສະທີ່ຈໍາເປັນສໍາລັບສະຕະວັດທີ 21. ການສະໜັບສະໜູນຂອງລັດຖະບານອົດສະຕຣາລີແມ່ນມີຄວາມສໍາຄັນຕໍ່ການຫັນປ່ຽນຄັ້ງນີ້, ແລະ ພວກເຮົາຂໍຂອບໃຈສໍາລັບຄວາມມຸ່ງໝັ້ນໃນການຊ່ວຍເຫຼືອຂອງພວກທ່ານ".

ທ່ານ ນາງ ເປັນນີຕາ ຊໍາເມີອິດ, ຮອງເອກະອັກຄະລັດຖະທູດອົດສະຕຣາລີ ມີຄໍາວ່າ: "ລັດຖະບານອົດສະຕຣາລີ ໄດ້ຖືເອົາສາຍພົວພັນອັນຍາວນານກັບ ລາວ ໂດຍສະເພາະກັບກະຊວງສຶກສາທິການ ແລະ ກິລາ ເປັນສິ່ງທີ່ສໍາຄັນຫຼາຍ. ການຮ່ວມມືອັນຍາວນານຂອງພວກເຮົາ, ໂດຍຜ່ານແຜນງານບີຄວາ, ໄດ້ສະທ້ອນໃຫ້ເຫັນວິໄສທັດ ແລະ ຄວາມມຸ່ງໝັ້ນຮ່ວມກັນຂອງພວກເຮົາໃນຂະແໜງການສຶກສາ ທີ່ສົ່ງເສີມການຮຽນຮ່ວມ ແລະ ມີຄຸນນະພາບ. ໃນການລົງຢ້ຽມຢາມໂຮງຮຽນຄັ້ງນີ້ ຖືເປັນວາລະທີ່ພາກພູມໃຈ ທີ່ໄດ້ເຫັນໝາກຜົນໃນທາງທີ່ດີຂອງການຮ່ວມມືຂອງພວກເຮົາ ເພື່ອເສີມສົ່ງເສີມເສັ້ນທາງການຮຽນຮູ້ຂອງເດັກ."

ຄຽງຄູ່ກັບການຢ້ຽມຢາມໂຮງຮຽນແລ້ວ ຄະນະຜູ້ແທນໄດ້ຢ້ຽມຊົມການວາງສະແດງທີ່ນໍາສະເໜີໂດຍຜູ້ຕາງໜ້າຈາກ ກະຊວງສຶກສາທິການ ແລະ ກິລາ. ການວາງສະແດງໄດ້ຍົກໃຫ້ເຫັນ 3 ຂົງເຂດສໍາຄັນທີ່ລັດຖະບານອົດສະຕຣາລີໃຫ້ການສະໜັບສະໜູນ ແລະ ເປັນໃຈກາງໃນການປັບປຸງການສຶກສາທີ່ກໍາລັງດໍາເນີນຢູ່ຄື: ຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດສະບັບປັບປຸງໃໝ່; ບົດຮຽນຝຶກເວົ້າພາສາລາວ ທີ່ສ້າງຂຶ້ນເພື່ອສະໜັບສະໜູນນັກຮຽນທີ່ບໍ່ໄດ້ເວົ້າພາສາລາວເປັນພາສາຫຼັກໃນຄອບຄົວ ແລະ ສົ່ງເສີມການຮຽນຮ່ວມໂດຍສະເພາະນັກຮຽນທີ່ມາຈາກຫຼາຍຊົນເຜົ່າ; ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອສົ່ງເສີມໃຫ້ຄູມີຄວາມຮູ້ຄວາມສາມາດ ແລະ ຮັບປະກັນການສອນທີ່ມີຄຸນນະພາບໃນທົ່ວປະເທດ.

ທ່ານ ກິ່ງມະໂນ ພົມມະຫາໄຊ ຍົກໃຫ້ເຫັນຕື່ມວ່າ: "ການສະໜັບສະໜູນຂອງລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ໄດ້ມີບົດບາດສໍາຄັນໃນການປັບປຸງຫຼັກສູດແຫ່ງຊາດ, ການສ້າງສື່ການຮຽນການສອນໃຫ້ມີຄຸນນະພາບ, ການສ້າງລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃຫ້ແກ່ຄູ. ໄລຍະທີ 2 ຂອງໂຄງການແມ່ນສຸມໃສ່ຮັບປະກັນໃຫ້ຄູອາຈານມີໂອກາດສືບຕໍ່



You, Tik Chandaraphone, Corinne Javary and 35 others   1 comment   6 shares

Like   Comment   Share

**2025-09-19** | **Economic and Commerce Facebook**

ຂ່າວເສດຖະກິດ-ການຄ້າ Lao Economic Daily
September 19 at 4:52 PM

ສະມາຊິກສະພາປະເທດອົດສະຕຣາລີ ແລະ ກະຊວງສຶກສາຮ່ວມສະຫຼອງການພັດທະນາການສຶກສາຊັ້ນປະຖົມ
#Pepsi
--------------
ອ່ານລະອຽດເພີ່ມຕື່ມທີ່: https://laoedaily.com.la/2024/10/17/137143/
ທ່ານສາມາດຕິດຕາມຂໍ້ມູນ-ຂ່າວສານອື່ນໆໄດ້ອີກທີ່ເວັບໄຊ:
https://laoedaily.com.la/
ຫຼື ກົດຕິດຕາມຮັບຊົມໄດ້ກ່ອນໃຜທີ່:
https://www.youtube.com/channel/UCjtOePaRAtTLufe1-lxwmrg
ຕິກຕັອກ: https://www.tiktok.com/@laoedaily
#ຂ່າວເສດຖະກິດການຄ້າ
#ເສດຖະກິດການຄ້າ




You, Tik Chandaraphone, Corinne Javary and 55 others   1 comment   9 shares

Like   Comment   Share

| 2025-09-19 | Lao National Television Youtube and TV |
| --- | --- |




**ຂ່າວພາກຄ່ຳ [19-09-2025]**

ໂທລະພາບແຫ່ງຊາດລາວ ທຊລ 1
133K subscribers
Subscribe

7 | Share | Download | Save

| 2025-09-22 | Lao People’s Army News Facebook |
| --- | --- |




Lao people's Army News
September 22 at 11:15 AM ·

ສະມາຊິກສະພາປະເທດອົດສະຕຣາລີ ແລະ ຄະນະນຳກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ຢ້ຽມຢາມ ໂຮງຮຽນປະຖົມ ເພື່ອຮັບຊົມໝາກຜົນຂອງການຮ່ວມມື
https://kongthap.gov.la/?lang=lo&at=at&hide=... See more

| 2025-09-22 | Pasaxon Facebook |
|---|---|

ປະຊາຊົນ
September 22 at 2:54 PM ·

ຄະນະຜູ້ແທນສະພາອົດສະຕຣາລີ ຢ້ຽມຢາມໂຮງຮຽນປະຖົມ ໃນ ນວ
-----------
ຄະນະຜູ້ແທນສະພາປະເທດອົດສຕຣາລີ ທີ່ເຂົ້າຮ່ວມໂຄງການລິເລີ່ມການເປັນຜູ້ນຳພາກພື້ນປະເທດອົດສຕຣາລີ (ARLI) ໄດ້ໄປຢ້ຽມຢາມໂຮງຮຽນປະຖົມແຫ່ງໜຶ່ງໃນນະຄອນຫຼວງວຽງຈັນ (ນວ) ໃນວັນທີ 19 ກັນຍາຜ່ານມາ ໂດຍມີ ທ່ານ ກົ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ (ສສກ), ທ່ານນາງ ເປັນນີຕາ ຊໍາເມີອົວ ຕາງໜ້າເອກອັກຄະລັດຖະທູດອົສຕຣາລີ ປະຈຳ ສປປ ລາວ, ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ການລົງຢ້ຽມຢາມຄັ້ງນີ້, ໄດ້ຮ່ວມກັນສັງເກດການສອນໃນຫ້ອງຮຽນທີ່ມີຄວາມມ່ວນຊື່ນ, ນັກຮຽນ ໄດ້ມີສ່ວນຮ່ວມໃນການຮຽນຢ່າງຫ້າວຫັນໃນວິຊາພາສາລາວ, ພາສາອັງກິດ, ວິທະຍາສາດ ແລະ ສິ່ງແວດລ້ອມ. ນັກຮຽນໄດ້ຮ່ວມການທົດລອງວິທະຍາສາດດ້ວຍການປະຕິບັດຕົວຈິງ ແລະ ຮ່ວມມືກັນຢ່າງເອົາໃຈໃສ່ໃນການເຮັດກິດຈະກຳຮຽນພາສາລາວ ແລະ ພາສາອັງກິດ ສະແດງໃຫ້ເຫັນເຖິງຄວາມມ່ວນຊື່ນ ແລະ ຄວາມມັກໃນການຮຽນ, ວິທີການສິດສອນແບບໃໝ່ຂອງຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່ ທີ່ສະໜັບສະໜູນໂດຍລັດຖະບານອົສຕຣາລີ ໄດ້ຊຸກຍູ້ໃຫ້ການຮຽນມີຄວາມມ່ວນຊື່ນ, ມີການຖາມ-ຕອບ ແລະ ການປະຕິບັດຕົວຈິງ, ໄດ້ປ່ຽນຈາກການຮຽນແບບເກົ່າທີ່ເນັ້ນແຕ່ການຈື່ຈຳ. ພ້ອມນັ້ນ, ຄູໄດ້ແນະນຳໃຫ້ນັກຮຽນໄດ້ຮຽນຮູ້ຜ່ານກິດຈະກຳຕ່າງໆ ໂດຍເນັ້ນໃສ່ການຄົ້ນຄິດແບບວິເຄາະ ແລະ ການມີສ່ວນຮ່ວມ, ສະແດງໃຫ້ເຫັນເຖິງຜົນສຳເລັດຂອງການປັບປຸງຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດ.

ທ່ານ ກົ່ງມະໂນ ພົມມະຫາໄຊ ກ່າວວ່າ: "ການຢ້ຽມຢາມໂຮງຮຽນຄັ້ງນີ້ ເປັນການສະແດງເຖິງສາຍພົວພັນຄູ່ຮ່ວມມືອັນໜັກແໜ້ນລະຫວ່າງ ສປປ ລາວ ແລະ ລັດຖະບານອົສຕຣາລີ ໃນການພັດທະນາການສຶກສາຂັ້ນພື້ນຖານໃຫ້ມີຄຸນນະພາບ, ພວກເຮົາຮ່ວມກັນສ້າງລະບົບການສຶກສາທີ່ສົ່ງເສີມການຮຽນຮ່ວມ ຊຶ່ງນັກຮຽນໄດ້ມີສ່ວນຮ່ວມຢ່າງຕັ້ງໜ້າໃນການຮຽນ ແລະ ພັດທະນາທັກສະທີ່ຈຳເປັນສຳລັບສະຕະວັດທີ 21. ການສະໜັບສະໜູນຂອງລັດຖະບານອົສຕຣາລີແມ່ນມີຄວາມສຳຄັນຕໍ່ການຫັນປ່ຽນຄັ້ງນີ້ ແລະ ພວກເຮົາຂໍຂອບໃຈສຳລັບຄວາມມຸ່ງໝັ້ນໃນການຊ່ວຍເຫຼືອ".

ທ່ານ ນາງ ເປັນນີຕາ ຊໍາເມີອົວ ໄດ້ກ່າວວ່າ: "ລັດຖະບານອົສຕຣາລີ ໄດ້ຖືເອົາສາຍພົວພັນອັນຍາວນານກັບ ສປປ ລາວ ໂດຍສະເພາະກັບກະຊວງ ສສກ ເປັນສິ່ງທີ່ສຳຄັນຫຼາຍ. ການຮ່ວມມືອັນຍາວນານຂອງພວກເຮົາ ໂດຍຜ່ານແຜນງານບີຄວາ ໄດ້ສະທ້ອນໃຫ້ເຫັນວິໄສທັດ ແລະ ຄວາມມຸ່ງໝັ້ນຮ່ວມກັນຂອງພວກເຮົາໃນຂະແໜງການສຶກສາ ທີ່ສົ່ງເສີມການຮຽນຮ່ວມ ແລະ ມີຄຸນນະພາບ. ໃນການລົງຢ້ຽມຢາມຄັ້ງນີ້ ຍັງຖືວ່າເປັນວາລະທີ່ພາກພູມໃຈທີ່ໄດ້ເຫັນໝາກຜົນໃນທາງທີ່ດີຂອງການຮ່ວມມືຂອງພວກເຮົາເພື່ອເສີມສົ່ງເສີມເສັ້ນທາງການຮຽນຮູ້ຂອງເດັກ."

ໂອກາດນີ້, ຄະນະຜູ້ແທນ ໄດ້ຢ້ຽມຊົມການວາງສະແດງ ທີ່ນຳສະເໜີໂດຍຜູ້ຕາງໜ້າຈາກ ສສກ ຊຶ່ງໄດ້ຍົກໃຫ້ເຫັນ 3 ຂົງເຂດສຳຄັນທີ່ລັດຖະບານອົສຕຣາລີໃຫ້ການສະໜັບສະໜູນ ແລະ ເປັນໃຈກາງໃນການປັບປຸງການສຶກສາທີ່ກຳລັງດຳເນີນຢູ່ຄື: ຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດສະບັບປັບປຸງໃໝ່; ບົດຮຽນຝຶກເວົ້າພາສາລາວ ທີ່ສ້າງຂຶ້ນເພື່ອສະໜັບສະໜູນນັກຮຽນທີ່ບໍ່ໄດ້ເວົ້າພາສາລາວເປັນພາສາຫຼັກໃນຄອບຄົວ ແລະ ສົ່ງເສີມການຮຽນຮ່ວມໂດຍສະເພາະນັກຮຽນທີ່ມາຈາກຫຼາຍຊົນເຜົ່າ ແລະ ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອສົ່ງເສີມໃຫ້ຄູມີຄວາມຮູ້ຄວາມສາມາດ ແລະ ຮັບປະກັນການສອນທີ່ມີຄຸນນະພາບໃນທົ່ວປະເທດ.

ທ່ານ ກົ່ງມະໂນ ພົມມະຫາໄຊ ຍັງໄດ້ຍົກໃຫ້ເຫັນວ່າ: "ການສະໜັບສະໜູນຂອງລັດຖະບານ ອົສຕຣາລີ ຜ່ານແຜນງານບີຄວາ ໄດ້ມີບົດບາດສຳຄັນໃນການປັບປຸງຫຼັກສູດແຫ່ງຊາດ, ການສ້າງສື່ການຮຽນການສອນໃຫ້ມີຄຸນນະພາບ, ການສ້າງລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃຫ້ແກ່ຄູ. ໄລຍະທີ 2 ຂອງໂຄງການແມ່ນສຸມໃສ່ຮັບປະກັນໃຫ້ຄູອາຈານມີໂອກາດສືບຕໍ່ຍົກລະດັບທັກສະ ແລະ ສະໜອງການສຶກສາຄຸນນະພາບສູງໃຫ້ແກ່ເດັກທຸກຄົນ."

(ຂ່າວ: ວັນເພັງ, ຂໍ້ມູນ-ພາບ: ບີຄວາ)



You and 6 others · 6 shares

Like · Comment · Share

| 2025-09-22 | Edu-Sport Daily News Facebook |
|---|---|

ໜັງສືພິມສຶກສາ, ວິທະຍາສາດ ແລະ ກິລາ ອອນລາຍ
September 22 at 12:31 PM ·

ຄະນະຜູ້ແທນອົດສະຕຣາລີ ແລະ ການນຳ ສສກ ລົງຢ້ຽມຢາມໂຮງຮຽນປະຖົມ ເພື່ອສັງເກດການປັບປຸງດ້ານການຮຽນການສອນ
++++++++++++++++++++++

ຄະນະຜູ້ແທນສະພາປະເທດອົດສະຕຣາລີ ທີ່ເຂົ້າຮ່ວມໂຄງການລິເລີ່ມການເປັນຜູ້ນຳພາກພື້ນປະເທດອົດສະຕຣາລີ (ARLI) ແລະ ການນຳກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ໄປຢ້ຽມຢາມໂຮງຮຽນປະຖົມແຫ່ງໜຶ່ງໃນນະຄອນຫຼວງວຽງຈັນ ເມື່ອວັນທີ 19 ກັນຍາ 2025 ທີ່ນະຄອນຫຼວງວຽງຈັນ ໂດຍການຮ່ວມຂອງ ທ່ານ ກົ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ, ທ່ານ ນາງ ເປັນນີຕາ ຊໍາເມີອົວ ຮອງເອກອັກຄະລັດຖະທູດອົດສະຕຣາລີ ປະຈຳ ສປປ ລາວ ພ້ອມດ້ວຍຄະນະກົມຈາກກະຊວງສຶກສາທິການ ແລະ ກິລາ (ສສກ), ຕາງໜ້າຈາກກະຊວງການຕ່າງປະເທດ ແລະ ກະຊວງການເງິນ, ພະນັກງານ, ຄູ-ອາຈານ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ການຢ້ຽມຢາມໄດ້ຍົກໃຫ້ເຫັນຜົນໄດ້ຮັບຕົວຈິງຂອງການໃຫ້ທຶນຊ່ວຍເຫຼືອຢ່າງຕໍ່ເນື່ອງຂອງລັດຖະບານອົດສະຕຣາລີ ໃນການສຶກສາຊັ້ນປະຖົມ ໂດຍຜ່ານແຜນງານບີຄວາ, ໂດຍສະມາຊິກສະພາປະເທດອົດສະຕຣາລີ ແລະ ການນຳ ສສກ ໄດ້ຮ່ວມສັງເກດການສອນໃນຫ້ອງຮຽນທີ່ມີຄວາມມ່ວນຊື່ນ, ນັກຮຽນໄດ້ມີສ່ວນຮ່ວມໃນການຮຽນຢ່າງຫ້າວຫັນໃນວິຊາພາສາລາວ, ພາສາອັງກິດ, ວິທະຍາສາດ ແລະ ສິ່ງແວດລ້ອມ, ນັກຮຽນໄດ້ຮ່ວມການທົດລອງວິທະຍາສາດດ້ວຍການປະຕິບັດຕົວຈິງ ແລະ ຮ່ວມມືກັນຢ່າງເອົາໃຈໃສ່ໃນການເຮັດກິດຈະກຳຮຽນພາສາລາວ ແລະ ພາສາອັງກິດ, ສະແດງໃຫ້ເຫັນເຖິງຄວາມມ່ວນຊື່ນ ແລະ ຄວາມມັກໃນການຮຽນ. ວິທີການສິດສອນແບບໃໝ່ຂອງຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ທີ່ສະໜັບສະໜູນໂດຍລັດຖະບານອົດສະຕຣາລີ ໄດ້ຊຸກຍູ້ໃຫ້ການຮຽນມີຄວາມມ່ວນຊື່ນ, ມີການຖາມຕອບ ແລະ ການປະຕິບັດຕົວຈິງ, ໄດ້ປ່ຽນຈາກການຮຽນແບບເກົ່າທີ່ເນັ້ນແຕ່ການຈື່ຈຳ. ຄູໄດ້ແນະນຳໃຫ້ນັກຮຽນໄດ້ຮຽນຮູ້ຜ່ານກິດຈະກຳຕ່າງໆ, ໂດຍເນັ້ນໃສ່ການຄົ້ນຄິດແບບວິເຄາະ ແລະ ການມີສ່ວນຮ່ວມ, ສະແດງໃຫ້ເຫັນເຖິງຜົນສຳເລັດຂອງການປັບປຸງຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດ.

ນອກຈາກນີ້, ຄະນະຜູ້ແທນໄດ້ຢ້ຽມຊົມການວາງສະແດງທີ່ນຳສະເໜີໂດຍຜູ້ຕາງໜ້າຈາກ ກະຊວງສຶກສາທິການ ແລະ ກິລາ ໂດຍໄດ້ຍົກໃຫ້ເຫັນ 3 ຂົງເຂດສຳຄັນທີ່ລັດຖະບານອົດສະຕຣາລີໃຫ້ການສະໜັບສະໜູນ ແລະ ເປັນໃຈກາງໃນການປັບປຸງການສຶກສາທີ່ກຳລັງດຳເນີນຢູ່ຄື: ຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດສະບັບປັບປຸງໃໝ່; ບົດຮຽນຝຶກເວົ້າພາສາລາວ ທີ່ສ້າງຂຶ້ນເພື່ອສະໜັບສະໜູນນັກຮຽນທີ່ບໍ່ໄດ້ເວົ້າພາສາລາວເປັນພາສາຫຼັກໃນຄອບຄົວ ແລະ ສົ່ງເສີມການຮຽນຮ່ວມໂດຍສະເພາະນັກຮຽນທີ່ມາຈາກຫຼາຍຊົນເຜົ່າ ແລະ ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອສົ່ງເສີມໃຫ້ຄູມີຄວາມຮູ້ຄວາມສາມາດ ແລະ ຮັບປະກັນການສອນທີ່ມີຄຸນນະພາບໃນທົ່ວປະເທດ ພ້ອມກັນນັ້ນຍັງໄດ້ມີການມອບ-ຮັບ ປຶ້ມນິທານ, ອຸປະກອນກິລາ ແລະ ອຸປະກອນການຮຽນໃຫ້ແກ່ໂຮງຮຽນນຳອີກ.

ຂ່າວໂດຍ: ບົວລະພາ



You, Soud Khamphasouk, Corinne Javary and 31 others · 4 shares

Like · Comment · Share

| 2025-09-22 | Laos News KPL Facebook |
|---|---|

ຂ່າວ Laos News - KPL
September 22 at 3:29 PM ·

Australia and Laos Celebrate Milestones in Primary Education Partnership

(KPL) On 19th September 2025, a delegation of Australian Parliamentarians participating in the Australian Regional Leadership Initiative (ARLI) visited a Primary School in Vientiane. They were joined by Mr. Kingmano Phommahaxay, Vice-Minister for Education and Sports of Lao PDR, Ms. Benita Sommerville, Deputy Ambassador, Australian Embassy, and senior officials from the Ministry of Education and Sports (MoES) and Ministry of Foreign Affairs. The visit highlighted the tangible outcomes of Australia's ongoing investment in primary education through the BEQUAL program.

https://kpl.gov.la/En/detail.aspx?id=94725



| 2025-09-23 | Vientiane Times Facebook |
|---|---|

Vientiane Times
September 23 at 8:34 AM ·

Laos, Australia reaffirm commitment to improving primary education

Lao government officials and Australian parliamentarians are celebrating key achievements in their partnership in primary education development, visiting target schools to observe improved teaching and learning in action.
Senior Lao officials and a delegation of Australian parliamentarians participating in the Australian Regional Leadership Initiative (ARLI) visited a primary school in Vientiane last week. (Read more below⬇️⬇️)



You, Corinne Javary and 21 others 1 comment 2 shares

Like Comment Share

| 2025-09-23 | Lao PSTV Facebook and TV |
|---|---|




| 2025-09-24 | Edu-Sport TV Online Facebook, Youtube and TV |
|---|---|



| | |
|---|---|
| **2025-09-25** | **Lao National Television-English Program Facebook and TV** |




| | |
|---|---|
| **2025-09-26** | **Lao Security News Facebook** |



| 2025-09-23 | Vientiane Times Website |
|---|---|

LAO PRESS IN FOREIGN LANGUAGES

Vientiane Times

www.vientianetimes.org.la www.vientianetimeslao.la

50th Lao National Day 2.12.1975 - 2.12.2025





**Lao officials and an Australian delegation visit a primary school in Vientiane last week.**

## Laos, Australia reaffirm commitment to improving primary education

Lao government officials and Australian parliamentarians are celebrating key achievements in their partnership in primary education development, visiting target schools to observe improved teaching and learning in action.

Senior Lao officials and a delegation of Australian parliamentarians participating in the Australian Regional Leadership Initiative (ARLI) visited a primary school in Vientiane last week.

Among the group were Laos' Deputy Minister of Education and Sports Mr Kingmano Phommahaxay and the Deputy Ambassador of the Australian Embassy, Ms Benita Sommerville.

The visit highlighted the tangible outcomes of Australia's ongoing investment in primary education through the BEQUAL programme.

The parliamentarians observed lively classrooms where students actively engaged in learning Lao Language and English, science classes, and environmental studies.

Children participated in hands-on experiments and collaborated enthusiastically on language activities, showing enjoyment and curiosity.

The new teaching approach of the revised primary curriculum supported by Australia encourages learning through fun, interaction, and practical application, moving away from rote memorisation.

Teachers guided students through activities, with a focus on critical thinking and participation, evidencing the success of the revamped primary school curriculum.

Mr Kingmano said "This visit reaffirms the strong partnership between Laos and Australia in advancing quality basic education."

He noted that Australia's support, through the BEQUAL programme, has played a pivotal role in revising the national curriculum, producing quality teaching and learning materials, and establishing a continuing professional development system for teachers.

The programme's second phase will ensure that teachers have ongoing opportunities to upgrade their skills and deliver high-quality education to every child.

Ms Sommerville said Australia highly values its long-standing relationship with Laos and the Ministry of Education and Sports.

"Our partnership, through the BEQUAL programme, reflects our shared vision and commitment to inclusive and quality education. This visit is a proud moment to see firsthand the positive impact of our collaboration to enhance children's learning journeys."

"Ensuring every child has access to quality education means embracing diversity and inclusivity. We are proud to support initiatives like the Spoken Lao approach, which helps students who don't speak Lao at home to fully participate and thrive in the classroom," she said.

The visit concluded with the donation of learning materials, including storybooks, sports equipment, and school supplies, from the Australian Government to the school.

| 2025-09-26 | BEQUAL Website |
|---|---|

BEQUAL

ກ່ຽວກັບແຜນງານບີຄວາ ກິດຈະກຳ ສື່ຕ່າງໆ ໂອກາດຮ່ວມງານກັບແຜນງານບີຄວາ ພາສາລາວ

# ສະມາຊິກສະພາປະເທດອົດສະຕຣາລີ ແລະ ຄະນະນຳກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ຮ່ວມສະເຫຼີມສະຫຼອງຜົນສຳເລັດອັນສຳຄັນຂອງການຮ່ວມມືສອງຝ່າຍໃນການພັດທະນາການສຶກສາຊັ້ນປະຖົມ

POSTED ON 26 ເດືອນກັນຍາ 2025


ນັກຮຽນຫ້ອງ ປ.4 ປູກແກ່ນພືດໃນດິນທີ່ແຕກຕ່າງກັນໃນວິຊາວິທະຍາສາດ ແລະ ສິ່ງແວດລ້ອມ

ຄະນະຜູ້ແທນຈາກປະເທດອົດສະຕາລີ ແລະ ການນຳຂັ້ນສູງ ລົງຢ້ຽມຢາມໂຮງຮຽນປະຖົມແຫ່ງໜຶ່ງ ເພື່ອສັງເກດການປັບປຸງດ້ານການຮຽນການສອນ













| | |
|---|---|
| 2025-10-15 | Education News Website |


ສຶກສາ, ວິທະຍາສາດ ແລະ ກິລາ
Education, Science and Sports Daily News

ຄະນະຜູ້ແທນສະພາອິດສະຕຣາລີ ແລະ ສສກ ລົງຢ້ຽມຢາມ ໂຮງຮຽນປະຖົມທົ່ງກາງ ເພື່ອສັງເກດການປັບປຸງດ້ານການຮຽນການສອນ

15/10/2025